ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ
ກົມແຜນການ ແລະ ການຮ່ວມມືສາກົນ
ຂາເຂົ້າ ເລກທີ 1134
ວັນທີ 28/8/2023

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການຕ່າງປະເທດ

ເລກທີ: 4477 /ຕປທ

ນະຄອນຫຼວງວຽງຈັນ, ວັນທີ 23 ສິງຫາ 2023

# ຂໍ້ຕົກລົງ

- ອີງຕາມດຳລັດນາຍົກລັດຖະມົນຕີ ສະບັບເລກທີ 013/ນຍ, ລົງວັນທີ 08 ມັງກອນ 2010 ວ່າດ້ວຍ ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ.
- ອີງຕາມ ໜັງສືສະເໜີຂອງກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ, ສະບັບເລກທີ 303/ຖວທ, ລົງວັນທີ 07 ກໍລະກົດ 2023;
- ອີງຕາມສະໂໜດນຳສົ່ງຂອງອົງການ Care International ປະຈຳ ສປປ ລາວ, ສະບັບເລກທີ CARE/2023/141, ລົງວັນທີ 09 ສິງຫາ 2023 ກ່ຽວກັບ ການນຳສົ່ງບົດບັນທຶກຄວາມເຂົ້າໃຈສະບັບປັບປຸງ.

## ລັດຖະມົນຕີ ຕົກລົງອະນຸມັດ:

<u>**ມາດຕາ 1**</u>: ຮັບເອົາໂຄງການຊ່ວຍເຫຼືອລ້າຈາກອົງການ CARE International ປະຈຳ ສປປ ລາວ.

<u>**ມາດຕາ 2**</u>: ລາຍລະອຽດຂອງໂຄງການມີດັ່ງນີ້:

- <u>**ຊື່ໂຄງການ**</u>: ໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສື່ມວນຊົນ ໂດຍການມີສ່ວນຮ່ວມຂອງອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງພາກສັງຄົມ ເພື່ອການພັດທະນາສີຂຽວ ໃນ ສປປ ລາວ (Green Action through Media, Mass Organization and Civil Society in Laos (GAMCIL)).
- <u>**ທີ່ຕັ້ງໂຄງການ**</u>: ກົມສື່ມວນຊົນ, ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ
- <u>**ໄລຍະການຈັດຕັ້ງປະຕິບັດ**</u>:ເລີ່ມແຕ່ມື້ໄດ້ຮັບອະນຸມັດ ຈົນເຖິງ ວັນທີ 28 ກຸມພາ 2027
- <u>**ມູນຄ່າໂຄງການ**</u>: 1.026.887 ເອີໂຣ (ໜຶ່ງລ້ານຊາວຫົກພັນແປດຮ້ອຍແປດສິບເຈັດເອີໂຣ)
- <u>**ແຫຼ່ງທຶນ**</u>: ສະຫະພາບເອີຣົບ
- <u>**ຈຸດປະສົງ**</u>: ຈຸດປະສົງລວມຂອງໂຄງການແມ່ນການປະກອບສ່ວນເພື່ອສັງລວມ, ສ້າງ ແລະ ພັດທະນາຂໍ້ມູນສີຂຽວ ເພື່ອໃຫ້ປະຊາຊົນເຂົ້າເຖິງຂໍ້ມູນຂ່າວສານດັ່ງກ່າວ ແລະ ປົກປ້ອງສິດເສລີພາບຂັ້ນພື້ນຖານໂດຍໃຫ້ສອດຄ່ອງກັບກົດໝາຍແຫ່ງຊາດ ແລະ ສັນຍາສາກົນ (ອີງຕາມເອກະສານເປົ້າໝາຍການພັດທະນາແບບຍືນຍົງ SGD 16.10).
- <u>**ກິດຈະກຳຫຼັກ**</u>:
- 1. ສື່ມວນຊົນຂອງລັດ ແລະ ສື່ພາກສັງຄົມທີ່ໄດ້ລົງທະບຽນຖືກຕ້ອງຕາມກົດໝາຍ ສປປ ລາວ ຈະໄດ້ຮັບການຍົກລະດັບທັກສະດ້ານວິຊາຊີບ ລວມທັງການນຳໃຊ້ເຕັກໂນໂລຊີແບບດີຈີຕອນ ແລະ ສື່ແບບໃໝ່, ເພື່ອເຮັດໃຫ້ປະຊາຊົນໄດ້ຮັບຂໍ້ມູນຂ່າວສານທີ່ມີຄຸນນະພາບ ໂດຍຜ່ານການລາຍງານທີ່ມີຄວາມຮັບຜິດຊອບ ແລະ ເປັນມືອາຊີບ ກ່ຽວກັບການພັດທະນາສີຂຽວ.

2. ບັນດາຜູ້ເຂົ້າຮ່ວມຈາກພາກສັງຄົມ (ອົງການຈັດຕັ້ງພາກສັງຄົມທີ່ກ່ຽວຂ້ອງກັບການພັດທະນາສື່ຂ່າວ, ຜູ້ນໍາໃຊ້ສື່ສັງຄົມອອນລາຍທົ່ວໄປ, ຜູ້ສ້າງວິດີໂອ ແລະ ຊຸບເງົາ) ໄດ້ຍົກລະດັບຄວາມຮູ້ ແລະ ຄວາມສາມາດ ຂອງຕົນເອງໃນການປະກອບສ່ວນສ້າງນະໂຍບາຍ, ຕິດຕາມ ແລະ ຊຸກຍູ້ ວຽກງານການພັດທະນາສື່ຂ່າວທີ່ມີຜົນກະທົບຕໍ່ຊຸມຊົນ ລວມທັງການນໍາໃຊ້ເຕັກໂນໂລຊີດີຈີຕອນ ແລະ ສື່ແບບໃໝ່ຢ່າງສ້າງສັນ.

- **ຜູ້ຄຸ້ມຄອງ ແລະ ຈັດຕັ້ງປະຕິບັດໂຄງການ:**
  - ກະຊວງຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ, ເປັນຜູ້ຄຸ້ມຄອງ ແລະ ຊີ້ນໍາມະຫາພາກ;
  - ກົມສື່ມວນຊົນ ແລະ ສະມາຄົມນັກຂ່າວແຫ່ງ ສປປ ລາວ ຮ່ວມກັບ ອົງການ Care International ເປັນຜູ້ຈັດຕັ້ງປະຕິບັດຕົວຈິງ.

**ມາດຕາ 3:** ກະຊວງ ແລະ ອົງການ ຕ້ອງລົມທົບກັນ ເພື່ອຈັດພິທີເຊັນບົດບັນທຶກຄວາມເຂົ້າໃຈນໍາກັນ ກ່ອນຈະດໍາເນີນການປະຕິບັດໂຄງການ ພາຍໃນ 30 ວັນ ຫຼັງຈາກມື້ລົງລາຍເຊັນຂໍ້ຕົກລົງສະບັບນີ້.

**ມາດຕາ 4:** ກະຊວງ, ອົງການ ແລະ ຂະແໜງການ ຕ້ອງມີການປະສານງານເປັນຢ່າງດີ, ມີຄວາມຮັບຜິດຊອບຢ່າງເດັດຂາດໃນການຄຸ້ມຄອງໃຫ້ມີປະສິດທິຜົນ, ຈັດຕັ້ງປະຕິບັດໂຄງການທີ່ອະນຸມັດໃຫ້ປະສົບຜົນສໍາເລັດຕາມຈຸດປະສົງທີ່ວາງໄວ້ ແລະ ສົ່ງບົດສະຫຼຸບລາຍງານການຈັດຕັ້ງປະຕິບັດ ປະຈໍາ 03 ເດືອນ, 06 ເດືອນ ແລະ ປະຈໍາປີ ໃຫ້ ກະຊວງການຕ່າງປະເທດ ແລະ ພະແນກການຕ່າງປະເທດແຂວງ.

**ມາດຕາ 5:** ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ເຊັນແທນລັດຖະມົນຕີ
ຮອງລັດຖະມົນຕີ

ກະຊວງການຕ່າງປະເທດ ລັດຖະມົນຕີ

ທອງຜ່ານ ສະຫວັນເພັດ

ບ່ອນນໍາສົ່ງ:

- ຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ 01 ສະບັບ
- ກະຊວງຖະແຫຼງຂ່າວ ແລະ ວັດທະນະທໍາ 01 ສະບັບ
- ກະຊວງປ້ອງກັນຄວາມສະຫງົບ 01 ສະບັບ
- ກະຊວງແຜນການ ແລະ ການລົງທຶນ 01 ສະບັບ
- ກະຊວງການເງິນ 01 ສະບັບ